G0107.10 : T3/9

COMMISSION OF ... MAY 18 1976

ข่าวสานไทดำ

# TAI DAM NEWSLETTER

May 13, 1976

Governor's Task Force for Indochinese Resettlement
523 E. 12th, Des Moines, Iowa 50319
Toll free 800.362.2780

Number 9

## STARTING YOUR OWN BUSINESS.

Virtually every business in the United States was started by a man who had ambition, know-how and courage. This can be seen everywhere you go in America.

There have been many immigrants arriving in the United States for a number of years. Many of these people decided to become successful entrepreneurs. Today's refugees from Indochina could duplicate these past examples.

The development of your own business has many advantages such as increased employment and a decrease in federal support needed for the refugees. The greatest asset to owning your own business is the feeling of pride and acomplishment.

Understandably, a small business venture can be a risk. There are, however, people who can help you get your feet on the ground. There are two federal government agencies- The Small Business Administration (SBA) and the office of Minority Enterprise of the Department of Commerce- that can be of help to you.

There are other specialists who can help you in the highly technical aspects of opening a business. You will need the advise of bankers, attorneys, insurance brokers, and accountants.

There are certain steps you must take before you can open your doors to the public if you want to be successful.

First, you must find the financial assistance necessary to enter into business. In a past newsletter, I discussed how to obtain a personal loan. The SBA and other organizations may be easier to get a loan from than a bank or other financial institution. I have listed below some other lending programs.

1. State and Local Development Company Loans.
2. Loans to Small Business Investment Companies.
3. Licensees organized to assist economically- disadvantaged entrepreneurs.

After securing financial assistance, it is necessary for the businessman to translate his vision into a working operation. He should plan out his expenses, nature of the proposed business and the expected sales volume. The businessman with the most realistic plan stands the best chance of success.

There are many different ways to own a business. You may form a partnership, may own it yourself ( called sole proprietorship), or form a corporation where there are many partners.

The successful businessman must become aware of the income tax structure and government regulations that influence his business. Local, State and federal regulations put control on business. The smart entrepreneur knows the laws and regulations that he is expected to abide by.

Another important consideration is choice of location. This will depend on the type of goods and services you plan to make availible.

Small businesses, sensitive to the slightest loss, need to be well insured. Several types of insurance policies are necessary, such as : Property insurance, Casualy insurance, Life insurance and Workmen's Compensation insurance. Before you open your business, be sure to discuss each of these programs with your insurance agent.

Accurate accounting methods are an absolute necessity to the proper management of a business, no matter how small. If you are aware of modern booking methods, utilize your knowledge to the best of your ability. If you have no knowledge, it is advisable to hire an accountant to prepare your books for you.

Finally, the only way people will learn of your new business is through the use of advertising. Small businessmen should make advertising costs a permanent part of their business budget.

There are over 11 million businesses in the United States. Last year alone, almost 500,000 new businesses were founded. You are not alone in seeking this gratifying experience and if you take advantage of the special programs available to you, you should build a healthy and prosperous business.

CORRECTION!

In Newsletter #5, I mentioned the " Consumer Protection Commission" or " Consumer Affairs" as the places to go if you feel you've been taken advantage of by a business. This is incorrect.

In such an instance, call the State Attorney General's office or your county Attorney's Office. If they cannot help you, they will direct you to somebody who can.

FREE ENGLISH CLASSES!!!!!

The Des Moines Public Schools will be having a "Learning to Speak English, Summer School Program" for the Indochinese. The program will be from June 9 through July 23 at East and North High Schools in Des Moines.

Classes will be from 8:00 a.m. to noon and are available to those between the ages of 6 and 20. For more information, check with the school principal.

GARDENING.

Many Iowans plant home gardens which provide fresh vegatables and flowers throughout the spring and summer. Gardening provides enjoyable and often profitable means of relaxing and working outdoors.

If you have a large family, a home garden can help your food budget considerably but you should count on canning and freezing the produce if you expect to save money on your groceries during the winter months.

To start a garden, clear away any brush or leaves left from the winter. When the soil is dry enough, hoe or plow it to the depth of a foot or more. You then rake it and may want to use fertilizer. Tools, fertilizer, seeds, and other accessories can be obtained at any hardware store or nursery. If you have any questions, ask the attenant at the store as they are happy to give you advice.

NOTICE TO NON-ENGLISH SPEAKING TAI DAM.

An interpreter must be present at all times with the family (including parents) during treatment at the Des Moines Health Center. This includes the interview, health history, and other such treatment that is indicated.

This is being done in hopes of ending some of the trauma the children are going through while undergoing treatment at the Center.

The Des Moines Health Center has indicated that any non- English speaking family brought to the Center without an interpreter will probably not be seen on that day and will have to be rescheduled for another appointment when an interpreter is available.

BICENTENNIAL FESTIVAL.

This is the bicentennial of the United States and the celebrations are abundant in Iowa.

Polk County is organizing a racial/ethnic cultural festival in which the Tai Dam Committee will participate.

The festival will take place on the State Capitol grounds in Des Moines on Saturday, May 22nd from noon till 7:00 p.m.

On the same day, from 8:30 to midnight, there will be dances performed at the Hyatt House Hotel, 6215 Fleur Drive in Des Moines. There is a $1.50/ticket charge for the dance festival.

The Tai Dam Committee has invited all Tai Dam families and sponsors to attend the festivals. For more information, contact: Mr. Houng Baccam. Telephone- 515-281-3109

SUMMER PICNIC!

There will be a picnic on June 16th at 5:00 pm in Gunder, Iowa for all of the Indochinese refugees living near that area.

This is a good chance to meet other Tai Dam and Vietnamese living in your vacinity.

For more information call:

Rev. Robert Henrikson- 319-783-7715 or

Pastor Manson- 319-532-7265

THE AMERICAN POLITICAL SYSTEM- STATE GOVERNMENT(Last in a series).

Each State has its own government and constitution. They are also divided into three separate branches-the Executive, Legislative and Judicial- and they function in the same way the Federal branches do.

The constitution for each state, such as Iowa, provides for a general plan for that State's government. Because different States have different needs, each State's constitution is unique only to that state.

The State's constitution declare the final authority of the people living in that state. However, because the Federal or United States Constitution is the supreme law of the land, every state is bound by it and all state constitutions and laws must agree with it.

The chief executive of the federal government is the President of the United States, as you may recall. The chief executive in each state is the 'Governor'. Iowa's Governor is Robert Ray.

The governnor's qualifications and term in office are determined by the State Constitution.

The governor, together with his executive officers, enforces the laws of that state.

Each state also has its own Senate, House of Representatives and Judicial branch. Their functions are similar to those of the federal government except they apply only to one state instead of a whole nation.

One of the most important services of a state is the protection of the health of its people. Most states have laws requiring that doctors, nurses, and persons who sell drugs have licenses.

State governments do many things to help educate their citizens. Each state sets certain standards of education for its school systems. It passes laws that require children to attend school. Public elementary and high schools are free.

The state also protects the lives and property of the people through the use of the police. The police provide for the safety, comfort and convenience of its people.

Basically, the state cares for its own problems. Most roads are under the controlof local governments and the repairing of these roads is paid for by the state.

Every day, in many ways, the state is part of the lives of its people. They must help the state by obeying the laws, paying the taxes, working for better laws and supporting the police in carrying out their duties. Each state is only as good as the people who live in it.

This concludes the series on the American Polical system. I hope you have enjoyed it and benefited from it. If you have any questions,

call me and I will either answer them or direct you to someone who can.

Call: Stan Fridstein 515-281-3912.
Or write to the return address on this Newsletter.

---oooOooo---

---

ການເລີ້ມຕົ້ນທຸຣະກິດ (ການຄ້າ) ດ້ວຍຕົນເອງ.

ຕາມຄວາມຈິງແລ້ວການຄ້າຢູ່ໃນສະຫະລັດອະເມຣິກາໄດ້ມີການເລີ້ມຕົ້ນໂດຍບຸກຄົນຜູ້ທີ່ມີຄວາມທະເຍີທະຍານ, ຄວາມຮູ້ແລະຄວາມກ້າຫານຊຶ່ງທ່ານອາດຈະເຫັນທົ່ວໆໄປແຕ່ລະບ່ອນທີ່ທ່ານໄປມາໃນອະເມຣິກາ.

ໄດ້ມີຊາວເຂົ້າເມືອງຫລາຍໆ ພວກເຂົ້າມາຢູ່ໃນສະຫະຣັດຫລາຍໆປີທີ່ຜ່ານມາຊຶ່ງເຂົາເຈົ້າເຫຼົ່ານັ້ນສ່ວນຫລາຍໄດ້ຕັດສິນເປັນນັກການຄ້າທີ່ສໍາເຣັດຜົນກັນ ຊາວອົພຍົບອິນໂດຈີນສມັຍນີ້ກໍອາດສາມາດເຮັດແບບດຽວນັ້ນໄດ້ເໝືອນກັນ.

ການເລີ້ມຕົ້ນກໍ່ຕັ້ງການຄ້າດ້ວຍຕົນເອງນໍາຜົນປະໂຍດມາໃຫ້ຢູ່ຫລາຍໆທາງເຊັ່ນເປັນການເພີ້ມໃຫ້ການເຮັດວຽກເຮັດການ ແລະຫລຸດຜ່ອນການຄ້ຳຊູຈາກຣັຖບານລົງທີ່ຊາວອົພຍົບຕ້ອງການ ຊຶ່ງທີ່ເຮັດໃຫ້ດີເລີດໃນການມີທຸຣະກິດຕົນເອງກໍຄືຄວາມຮູ້ສຶກພູມໃຈແລະສໍາເຣັດຜົນນັ້ນເອງ.

ເປັນທີ່ເຂົ້າໃຈວ່າ, ການຄ້າເລັກໆນ້ອຍໆນັ້ນອາດເປັນການສ່ຽງ ແຕ່ວ່າມີບຸກຄົນຜູ້ທີ່ສາມາດໃຫ້ການຊ່ວຍເຫຼືອທ່ານເລີ້ມຕົ້ນໄດ້. ມີອົງການຣັຖບານກາງຢູ່ສອງອົງການ ຄືວ່າ Small Business Administration (SBA) ແລະ Office of Minority Enterprise ຂອງກະຊວງການຄ້າທີ່ອາດສາມາດຊ່ວຍເຫຼືອທ່ານໄດ້.

ຍັງມີຄນະຊ່ຽວຊານຢູ່ອີກຫລາຍຜູ້ທີ່ອາດສາມາດຊ່ວຍເຫຼືອທ່ານໄດ້ໃນດ້ານຄວາມຮູ້ຄວາມສາມາດໃນການເປີດການຄ້າ. ທ່ານອາດຈະຕ້ອງການຄໍາແນະນໍາຈາກນັກທະນາຄານ, ທະນາຍຄວາມ, ນັກປະກັນພັຍ ແລະນັກບັນຊີ.

ມີບາງບາດກ້າວຫຼືວິທີການທີ່ທ່ານຈະຕ້ອງເລືອກບ່ອນທ່ານສາມາດເປີດປະຕູເຂົ້າສູ່ນໍາການເຮັດນໍາຄົນ ຖ້າທ່ານຕ້ອງການຢາກຈະປະສົບກັບຄວາມສໍາເຣັດຜົນ.

ໃນການເລີ້ມຕົ້ນກໍຄື ທ່ານຕ້ອງຊອກບ່ອນທີ່ຈະກູ້ຢືມເງິນໄດ້ທີ່ຈໍາເປັນໃນການເລີ້ມຕົ້ນການຄ້ານັ້ນ. ໃນຂ່າວສານສະບັບທີ່ແລ້ວຂ້າພະເຈົ້າໄດ້ກ່າວເຖິງການຢືມເງິນຕ່າງໆໄປແລ້ວ. ອົງການ SBA ແລະອົງການອື່ນໆອາດຈະເປັນບ່ອນທີ່ງ່າຍທີ່ສຸດໃນການຂໍກູ້ຢືມເງິນກ່ອນທະນາຄານ ຫຼືອົງການກູ້ຢືມຕ່າງໆ. ສຖານທີ່ດັ່ງຕໍ່ໄປນີ້ຄືເປັນບ່ອນທີ່ມີໂຄງການໃຫ້ກູ້ຢືມເງິນ:

໑- ບໍຣິສັດພັທນາກູ້ຢືມຂອງຣັດແລະທ້ອງຖິ່ນຕ່າງໆ

໒. ບໍຣິສັດກູ້ຢືມສໍາລັບຜູ້ທີ່ເລີ້ມກໍ່ຕັ້ງການຄ້າເລັກໆນ້ອຍໆ

໓. ຄນະຜູ້ທີ່ມີອະນຸຍາດເພື່ອຊ່ວຍເຫຼືອນັກການຄ້າທີ່ຂາດແຄນພາຫານະຕ່າງໆ.

ຫຼັງຈາກຮູ້ວ່າໄດ້ມີການຊ່ອຍເຫຼືອທາງດ້ານເງິນທຶນແລ້ວເປັນສິ່ງຈຳເປັນທີ່ນັກທຸຣະກິດນັ້ນຈະຕ້ອງແປແຜນຂອງຕົນນັ້ນໃຫ້ເປັນແຜນອັນຈະປະຕິບັດໄດ້ . ເຂົາຄວນວາງແຜນລາຍຈ່າຍຂອງເຂົາ, ປະເພດຂອງການຄ້າທີ່ຄິດເອົາໄວ້ແລະປະຣິມານຂອງການຂາຍທີ່ກະໄວ້ ນັກທຸຣະກິດທີ່ມີແຜນອັນແນ່ນອນຈະມີໂອກາດຫຼາຍທີ່ສຸດປະສົບຜົນສຳເຣັດ .

ມີຫຼາຍຊ່ອງທາງດ້ວຍກັນທີ່ຈະເລີ້ມທຸຣະກິດດ້ວຍຕົນເອງ ທ່ານອາດຈະຮ່ວມເປັນເຈົ້າຂອງກັບຄົນອື່ນ ຫຼືເຮັດຜູ້ດຽວທ່ານຊຶ່ງຖືວ່າເປັນການຈຳກັດແຕ່ຜູ້ດຽວ ຫຼືຮ່ວມກັນເປັນບໍຣິສັດຊຶ່ງມີຫຼາຍໆຄົນຮ່ວມກັນເປັນເຈົ້າຂອງ .

ນັກທຸຣະກິດທີ່ສຳເຣັດຜົນຕ້ອງໃຫ້ຮູ້ຈັກດີກ່ຽວກັບຣະບຽບການຂອງການພາສີລາຍໄດ້ແລະກົດເກນຂອງຣັຖບານທີ່ມີຕໍ່ການຄ້ານັ້ນ ກົດຣະບຽບຕ່າງໆຂອງທ້ອງຖິ່ນ(ເຂດ), ຂອງຣັດແລະຂອງຣັຖບານກາງ ມີສ່ວນຄວບຄຸມການຄ້າທຸກໆຊນິດ . ນັກການຄ້າທີ່ສລາດຮູ້ຈັກດີກົດໝາຍແລະຣະບຽບການຕ່າງໆທີ່ເຂົາຈະຕ້ອງໄດ້ຕາມແລະນັບຖື .

ສິ່ງສຳຄັນອີກສິ່ງນຶ່ງໃນການພິຈາຣະນາກໍຄືສະຖານທີ່ໆຈະເລືອກຊຶ່ງກ່ຽວກັບເຣື່ອງນີ້ແລ້ວແມ່ນຂຶ້ນຢູ່ກັບປະເພດຂອງສິນຄ້າແລະການບໍຣິການທ່ານກະຈະໃຫ້ມີຂຶ້ນ .

ການຄ້ານ້ອຍໆຊຶ່ງອາດມີການຂາດທຶນນ້ອຍຕ້ອງການມີປະກັນພັຍໄວ້ . ການປະກັນພັຍມີຢູ່ຫຼາຍໆປະເພດດ້ວຍກັນທີ່ອາດຈະຈຳເປັນເຊັ່ນ ປະກັນພັຍສັພສົມບັດ, ປະກັນພັຍອຸປັດຕິເຫດ, ປະກັນພັຍຊີວິດ ແລະປະກັນພັຍທົບແທນຂອງຄົນງານ ເປັນຕົ້ນ ກ່ອນທ່ານຈະເປີດການຄ້າຂອງທ່ານ ຂໍໃຫ້ໄດ້ປຶກສາຫາລືເຣື່ອງດັ່ງກ່າວນີ້ກັບເຈົ້າໜ້າທີ່ປະກັນພັຍຂອງທ່ານເສັຽກ່ອນ .

ວິທີການບັນຊີອັນແນ່ນອນເປັນສິ່ງຈຳເປັນຍິ່ງໃນການບໍຣິຫານການຄ້າທີ່ຖືກຕ້ອງເຖິງແມ່ນວ່າການຄ້ານັ້ນຈະນ້ອຍປານໃດກໍຕາມ ຖ້າທ່ານຮູ້ເຖິງວິທີຂອງແບບເຮັດບັນຊີສມັຍໃໝ່ແລ້ວກໍຂໍໃຫ້ນຳເອົາໄປໃຊ້ເທົ່າທີ່ທ່ານຈະມີຄວາມສາມາດໃຊ້ ຖ້າເຫັນວ່າທ່ານບໍ່ມີຄວາມຮູ້ໃນດ້ານດັ່ງກ່າວກໍຂໍໃຫ້ຈ້າງນັກບັນຊີມາເຮັດບັນຊີໃຫ້ກໍຈະເປັນການດີຍິ່ງ .

ທ້າຍສຸດມາກໍຄືມີວິທີທາງດຽວກ່ອນຜູ້ຄົນຈະຮູ້ເຖິງການຄ້າໃໝ່ຂອງທ່ານໄດ້ກໍຄືຈາກການໂຄສນາເທົ່ານັ້ນ ນັກການຄ້ານ້ອຍໆຄວນຮ່ວມຄ່າໂຄສນາຕ່າງໆນັ້ນເປັນສ່ວນອັນຖາວອນຂອງງົບປະມານການຄ້ານັ້ນ . ໃນສະຫະຣັດອະເມຣິກາ ມີທຸຣະກິດນຳກັນທັງໝົດປະມານ ໑໑ ລ້ານຢ່າງ ໃນປີທີ່ແລ້ວມານີ້ເທົ່ານັ້ນປະມານ ໕໐໐ ໐໐໐ ຢ່າງໄດ້ຈັດຕັ້ງຂຶ້ນ ສນັ້ນ ບໍ່ມີແຕ່ທ່ານຜູ້ດຽວເທົ່ານັ້ນທີ່ສແວງຫາປະສົບປະການອັນພຶງພໍໃຈນີ້ ແລະ ຖ້າທ່ານຫາກຈະເອົາໂອກາດໃຫ້ໄດ້ຮັບຜົນປະໂຍດຕໍ່ໂຄງການຕ່າງໆທີ່ມີໄວ້ໃຫ້ພວກທ່ານແລ້ວ ທ່ານຄວນສາມາດຈັດຕັ້ງເປີດການຄ້າອັນເຕັມໄປດ້ວຍຄວາມອຸດົມສົມບູນແລະຖາວອນໄດ້ເຊັ່ນດຽວກັນ .

## ແກ້ຄວາມຜິດ

ໃນຂ່າວສານສະບັບທີ່ ໕ ຂ້າພະເຈົ້າໄດ້ເວົ້າວ່າ "ສຳນັກງານປ້ອງກັນຜູ້ບໍຣິໂພກ" ຫຼື "ວຽກການທີ່ກ່ຽວກັບຜູ້ບໍຣິໂພກ" ເປັນບ່ອນທີ່ຄວນຕິດຕໍ່ ຖ້າພວກທ່ານຮູ້ສຶກວ່າທາງການຄ້າຕ່າງໆໄດ້ເອົາປຽບເອົາຣັດແກ່ທ່ານ .

ຄຳເວົ້າດັ່ງກ່າວເປັນການບໍ່ຖືກຕ້ອງ ສະນັ້ນຖ້າມີບັນຫາດັ່ງກ່າວນັ້ນແລ້ວຂໍໃຫ້ຕິດສາຍຫາຫ້ອງການຝ່າຍສານຂອງຣັດ ຫຼື ຂອງເຂດທີ່ທ່ານຢູ່ນັ້ນ. ຖ້າເຂົາເຈົ້າບໍ່ສາມາດຊ່ວຍທ່ານໄດ້ເຂົາເຈົ້າກໍຈະແນະນຳທ່ານໄປຍັງຜູ້ທີ່ອາດສາມາດຊ່ວຍທ່ານໄດ້.

## ການຮຽນພາສາອັງກິດໂດຍບໍ່ໄດ້ເສັຽຄ່າ.

ທາງໂຮງຮຽນຣັຖບານເຂດເມືອງ Des Moines ຈະເປີດການສອນພາກຍາມຮ້ອນຂຶ້ນເພື່ອຮຽນປາກເວົ້າພາສາອັງກິດໃຫ້ສຳລັບຊາວອິນໂດຈີນ ການສອນດັ່ງກ່າວຈະໄດ້ເລີ້ມແຕ່ວັນທີ ໙ ເດືອນ ມິຖຸນາ (ຈູນ) ຫາ ວັນທີ ໒໗ ເດືອນ ກໍຣະກະດາ (ຈູລາຍ) ທີ່ໂຮງຮຽນມັທຍົມຕາເວັນອອກ ແລະມັທຍົມເຂດເໜືອ ໃນເມືອງ Des Moines ເອງ.

ການຮຽນແຕ່ລະມື້ຈະໄດ້ເລີ້ມແຕ່ເວລາ ໘ ໂມງ ເຊົ້າ ຫາ ທ່ຽງ ແລະຈັດຂຶ້ນສຳລັບເດັກອາຍຸແຕ່ ໕ ປີ ຫາ ໒໐ ປີ. ເພື່ອລາຍລະອຽດກະຣຸນາຕິດຕໍ່ກັບຜູ້ອຳນວຍການໂຮງຮຽນທີ່ພວກທ່ານເຂົ້າຮຽນນັ້ນ.

## ການເຮັດສວນຄົວ

ຕລອດຣະດູໃບໄມ້ປົ່ງແລະຣະດູຮ້ອນ ຊາວໄທລາວສ່ວນຫຼາຍໄດ້ພາກັນເຮັດສວນຄົວເພື່ອໃຫ້ໄດ້ຮັບຜັກສົດແລະດອກໄມ້ຕ່າງໆ ການເຮັດສວນຄົວເປັນໂອກາດນຶ່ງທີ່ເຮັດໃຫ້ໄດ້ອອນຊອນ ແລະພັກຜ່ອນພ້ອມທັງໄດ້ເຮັດວຽກຢູ່ນອກເຮືອນອີກດ້ວຍ.

ຖ້າທ່ານມີຄອບຄົວຫຼາຍຄົນ ການເຮັດສວນຄົວສາມາດຊິດຊ່ວຍຄ່າສະບຽງອາຫານໄດ້ຢ່າງສົມຄວນ ແຕ່ທ່ານຄວນຈະຄິດເຖິງເຣື້ອງການເຮັດກະປ໋ອງດອງ ແລະຮັກສາເປັນຜົນລັບປູກນັ້ນພ້ອມ ຖ້າທ່ານກະວ່າເພື່ອຈະໄດ້ເປັນການຜ່ອນຜັນເຣື້ອງການໄປຕລາດຕອນຍາມໜາວ. ໃນການເລີ້ມຕົ້ນເຮັດສວນຄົວກັນນັ້ນ ໃຫ້ກວາດໃບໄມ້ແລະກິ່ງໄມ້ທີ່ເຫຼືອຈາກຣະດູໜາວນັ້ນອອກໃຫ້ໝົດ ແລະເມື່ອດິນນັ້ນຫາກແຫ້ງດີແລ້ວຈຶ່ງຂຸດແລະໄຖເລິກປະມານນຶ່ງຟຸດ ຫຼື ເລິກກ່ອນນັ້ນ ແລ້ວຈຶ່ງຄາດພ້ອມ ແລະອາດຈະໃສ່ຝຸ່ນໄປພ້ອມ. ເຄື່ອງອຸປກອນເຮັດສວນ, ຝຸ່ນ, ແກ່ນຜັກ ແລະເຄື່ອງອື່ນໆຕ່າງໆ ສາມາດຊື້ໄດ້ທີ່ຮ້ານຄ້າເຄື່ອງອຸປກອນ ຫຼື ເຮືອນເພາະຊຳ. ຖ້າທ່ານມີຄຳຖາມຫຍັງກໍຂໍໃຫ້ສອບຖາມເຈົ້າຂອງຮ້ານນັ້ນຊຶ່ງເຂົາເຈົ້າເອງກໍຈະຍິນດີໃຫ້ຄຳແນະນຳທ່ານໄດ້ດີ.

## ປະກາດສຳລັບຊາວໄທດຳທີ່ປາກອັງກິດບໍ່ໄດ້

ນາຍພາສາຈະຕ້ອງໄດ້ໄປນຳທຸກໆຄັ້ງຍາມທີ່ພວກທ່ານໄປກວດໂຮງໝໍທີ່ສູນກາງອານາມັຍ ທີ່ເມືອງ Des Moines ຊຶ່ງມີທັງການໄປເພື່ອສຳພາດ, ໄປໃຫ້ປະວັດສຸຂພາບ ຫຼື ໄປກວດຕ່າງໆກໍຕາມ.

ການທີ່ເຮັດໄປເຊັ່ນນັ້ນກໍຫວັງວ່າໃຫ້ການຮັກສາປິ່ນປົວເດັກທີ່ໄດ້ຮັບການເບິ່ງແຍງຈາກສູນກາງນັ້ນລຸລ່ວງໄປດ້ວຍດີ. ສະນັ້ນທາງສູນກາງອານາມັຍເມືອງ Des Moines ຈຶ່ງຂໍແຈ້ງມາໃຫ້ຊາບວ່າຜູ້ທີ່ປາກພາສາອັງກິດບໍ່ເປັນ ເມື່ອໄປປິ່ນປົວທີ່ສູນກາງໂດຍບໍ່ໄດ້ເອົານາຍພາສາໄປພ້ອມນັ້ນບາງທີອາດບໍ່ສາມາດເຂົ້າພົບເຈົ້າ

ໜ້າທີ່ປິ່ນປົວໄດ້ແລະຈະໄດ້ເຮັດໝາຍນັດໃໝ່ໄປຈົນກວ່າຈະມີນາຍພາສາເສັຽກ່ອນ .

## ງານສະເລີມສລອງວັນຄົບຮອບສອງຮ້ອຍປີ -

ປີນີ້ເປັນປີຄົບຮອບສອງຮ້ອຍປີແຫ່ງການເປັນປະເທດຂອງສະຫະຣັດອະເມຣິກາ ແລະມີການສະເລີມສລອງກັນຢູ່ທຸກແຫ່ງຫົນໃນຣັດໄອໂອວາ .

ທາງເຂດ Polk County ຈະໄດ້ຈັດງານວັທນະທັມເຜົ່າແລະເຊື້ອຊາດຕ່າງໆຂຶ້ນຊຶ່ງທາງກັມການຊາວໄທດຳເຮົາໄດ້ຂໍເຂົ້າຮ່ວມນຳດ້ວຍ . ງານດັ່ງກ່າວຈະໄດ້ຈັດໃຫ້ມີຂຶ້ນທີ່ State Capitol Grounds ເມືອງ Des Moines ໃນວັນເສົາ ວັນທີ ໒໒ ເດືອນ ພຶດສພາ (ເມ) ແຕ່ທ່ຽງ ໑໒ ໂມງ ຫາ ໗ ໂມງແລງ .

ໃນວັນດຽວກັນນັ້ນເລີ້ມແຕ່ ໘ ໂມງ ໓໐ ຫາ ທ່ຽງຄືນ ຈະໄດ້ມີການສະແດງຟ້ອນຂຶ້ນທີ່ໂຮງແຮມ Hyatt House Hotel , 6215 Fleur Drive (ທາງໄປເດີ່ນບິນ) ທີ່ເມືອງ Des Moines ເອງ . ຄ່າປີ້ເຂົ້າເບິ່ງງານສະແດງຟ້ອນດັ່ງກ່າວຄື $໑,໕໐ ຕໍ່ປີ້ໜຶ່ງ .

ທາງຄນະກັມການຊາວໄທດຳຂໍເຊີນຄອບຄົວຊາວໄທດຳທຸກໆຄອບຄົວແລະຜູ້ຮັບຮອງທຸກໆຄົນຈົ່ງໄດ້ໄປຮ່ວມງານດັ່ງກ່າວນີ້ນຳກັນ . ເພື່ອລາຍລະອຽດຕ່າງໆກະຣຸນາຕິດຕໍ່ທ່ານຮຸ່ງ ບັກຄຳ ໂທຣ. 515/281-3109 .

## ປິກນິກໃນຍາມຮ້ອນ

ໃນວັນທີ ໑໔ ເດືອນ ມິຖຸນາ (ຊວນ) ເລີ້ມແຕ່ເວລາ ໕ ໂມງແລງ ທີ່ເມືອງ Gunder ຈະມີການຈັດປິກນິກ (ການກິນເຂົ້າປ່າ) ຂຶ້ນສຳລັບຊາວອົພຍົບອິນໂດຈີນທີ່ຢູ່ໃກ້ເຂດດັ່ງກ່າວນັ້ນ .

ການຈັດປິກນິກດັ່ງກ່າວຈະເປັນໂອກາດໃຫ້ໄດ້ພົບພໍ້ຊາວໄທດຳແລະວຽດນາມອື່ນໆທີ່ຢູ່ໃກ້ເຂດດັ່ງກ່າວນັ້ນ . ເພື່ອລາຍລະອຽດຂໍໃຫ້ຕິດຕໍ່ບຸກຄົນດັ່ງຕໍ່ໄປນີ້ :

Rev. Robert Henrikson ໂທຣ. 319/783-7715

ຫຼື Pastor Manson ໂທຣ. 319/532-7265 .

## ຣະບົບການເມືອງອະເມຣິກັນ - ຣັຖບານຂັ້ນຣັດ (ບົດສຸດທ້າຍ)

ແຕ່ລະຣັດມີຣັຖບານແລະຣັຖທັມມະນູນໃຜລາວເອງ , ແລະກໍໄດ້ແບ່ງອອກເປັນສາມສາຂາເໝືອນກັນ ຄືສາຂາບໍຣິຫານ , ສາຂານິຕິບັນຍັດ ແລະ ສາຂາຕຸລາການ ພ້ອມທັງມີພາຣະໜ້າທີ່ເຊັ່ນດຽວກັນກັບຂອງຣັຖບານກາງນັ້ນ .

ຣັຖທັມມະນູນສຳລັບແຕ່ລະຣັດເຊັ່ນຣັດໄອໂອວາໃຫ້ແຜນທົ່ວໆໄປແກ່ຣັຖບານຂອງຣັດ ເນື່ອງຈາກວ່າແຕ່ລະຣັດທີ່ແຕກຕ່າງກັນມີຄວາມຕ້ອງການບໍ່ຄືກັນ ຣັຖທັມມະນູນຂອງແຕ່ລະຣັດຈຶ່ງຖືກແຕ່ງຕັ້ງຂຶ້ນສະເພາະຣັດນັ້ນໆເທົ່ານັ້ນ .

ຣັຖທັມມະນູນຂອງຣັດນຶ່ງປະກາດສິດຂອງປະຊາຊົນໃນຣັດນັ້ນເທົ່ານັ້ນ . ແຕ່ວ່າ, ເນື່ອງຈາກວ່າຣັຖທັມມະນູນຂອງສະຫະຣັດອະເມຣິກາ ຄື ກົດໝາຍສູງສຸດຂອງປະເທດ ແຕ່ລະຣັດຈະຕ້ອງຕາມ ແລະຣັຖທັມມະນູນ ແລະກົດໝາຍຂອງຣັດຈະຕ້ອງໃຫ້ກົງກັນກັບຂອງຣັຖບານກາງສເມີ .

ຫົວໜ້າຜແນກ (ສາຂາ) ບໍຣິຫານຂອງຣັຖບານກາງກໍຄືປະທານາທິບໍດີຂອງສະຫະຣັດອະເມຣິກາ ດັ່ງທ່ານອາດຈະຈົດຈຳໄດ້ດີ ຫົວໜ້າຜແນກບໍຣິຫານໃນແຕ່ລະຣັດກໍຄື " ເຈົ້າຣັດ " ເຈົ້າຣັດຂອງໄອໂອວ່າກໍຄື Robert Ray.

ອົງຄຸນນະວຸດທິແລະກຳນົດການຮັບໃຊ້ຂອງເຈົ້າຣັດນັ້ນແມ່ນໄດ້ຂຽນໄວ້ໃນຣັຖທັມມະນູນຂອງຣັດເອງ . ເຈົ້າຣັດຮ່ວມກັນກັບເຈົ້າໜ້າທີ່ຝ່າຍປົກຄອງຂອງເພິ່ນເປັນຜູ້ບັງຄັບກົດໝາຍຂອງຣັດ .

ແຕ່ລະຣັດມີສພາສູງ ສະພາຕ່ຳ ແລະສາຂາຕຸລາການຂອງໃຜລາວອີ່ງ ພາຣະໜ້າທີ່ຂອງສຖາບັນດັ່ງກ່າວກໍເຊັ່ນດຽວກັນກັບຂອງຣັຖບານກາງນັ້ນເວັ້ນເສັຍແຕ່ເບິ່ງສະເພາະແຕ່ໃນຣັດເທົ່ານັ້ນແທນທີ່ຈະເບິ່ງໃນທົ່ວປະເທດ .

ການຮັບໃຊ້ອັນສຳຄັນອັນນຶ່ງຂອງຣັດກໍຄືການປ້ອງກັນສຸຂພາບຂອງປະຊາຊົນຂອງຕົນ . ຢູ່ໃນຫຼາຍໆຣັດມີກົດໝາຍບັງຄັບໃຫ້ທ່ານໝໍ ນາງພຍາບານ ແລະບຸກຄົນທີ່ຂາຍຢານັ້ນຕ້ອງມີໃບອະນຸຍາດເສັຍກ່ອນ .

ຣັຖບານຂອງຣັດມີຫຼາຍສິ່ງຫຼາຍຢ່າງເພື່ອໃຫ້ຄວາມຊ່ອຍເຫຼືອແກ່ປະຊາຊົນຂອງຕົນໃຫ້ໄດ້ຮັບການສຶກສາ ແຕ່ລະຣັດໄດ້ຕັ້ງມາດຕາການດ້ານການສຶກສາສຳຣັບຣະບົບການສຶກສາຂອງໃຜລາວຂຶ້ນເອງ ທັງໄດ້ຜ່ານກົດໝາຍບັງຄັບໃຫ້ເດັກເຂົ້າໂຮງຮຽນ . ການເຂົ້າໂຮງຮຽນປະຖົມແລະມັທຍົມຂອງຣັຖບານບໍ່ມີການເສັຍຄ່າແຕ່ຢ່າງໃດ .

ຣັດໄດ້ປ້ອງກັນຊີວິດແລະຊັພສິນຂອງປະຊາຊົນດ້ວຍການໃຫ້ມີຕຳຣວດຜູ້ທີ່ໃຫ້ຄວາມປອດພັຍ ຄວາມອົບອຸ່ນ ແລະຄວາມສະດວກແກ່ປະຊາຊົນ .

ສຣຸບແລ້ວ ແຕ່ລະຣັດກໍກັບແກ້ໄຂບັນຫາຂອງໃຜລາວເອງ . ຖນົນຫົນທາງສ່ວນຫຼາຍຢູ່ໃນຄວາມຄວບຄຸມຂອງຣັຖບານຂັ້ນທ້ອງຖິ່ນ ແລະການເສັຍຄ່າຊ້ອມແປງຖນົນຫົນທາງຕ່າງໆ ແມ່ນຣັດເປັນຜູ້ເສັຍ .

ແຕ່ລະມື້ ໃນທຸກໆດ້ານ ຣັດກໍຄືສ່ວນນຶ່ງຂອງຊີວິດຂອງປະຊາຊົນນັ້ນເອງ . ປະຊາຊົນຈະຕ້ອງໃຫ້ຄວາມຮ່ວມມືແກ່ຣັດໂດຍເຄົາຣົບນັບຖືກົດໝາຍ ເສັຍຄ່າພາສີ ຮ່ວມກັນອອກຫົວຄິດແຕ່ງຕັ້ງກົດໝາຍໃຫ້ດີຂື້ນ ແລະຮ່ວມມືຕຳຣວດໃນການປະຕິບັດໜ້າທີ່ຂອງເຂົາເຈົ້າ . ແຕ່ລະຣັດຈະຈົບຈະດີໄດ້ກໍຕໍ່ເມື່ອປະຊາຊົນຜູ້ທີ່ອາສັຍຢູ່ນັ້ນເປັນໃຫຍ່ .

ການຂຽນກ່ຽວກັບຣະບົບການເມືອງອະເມຣິກັນໄດ້ສຸດພຽງເທົ່ານີ້ . ຂ້າພະເຈົ້າຫວັງວ່າພວກທ່ານຄົງໄດ້ຮັບຄວາມເພີດເພີນໃຈ ແລະໄດ້ຮັບຜົນຈາກການອ່ານນັ້ນ . ຖ້າພວກທ່ານມີຄຳຖາມຕ່າງໆ ກະຣຸນາຕີສາຍມາຍັງຂ້າພະເຈົ້າ . ຖ້າຂ້າພະເຈົ້າບໍ່ສາມາດຕອບທ່ານໄດ້ຂ້າພະເຈົ້າກໍຈະແນະນຳທ່ານໄປຍັງຜູ້ອື່ນ ຜູ້ທີ່ອາດສາມາດຕອບບັນຫາຂອງທ່ານໄດ້ດີ .

Stan Fridstein ໂທຣ. 515/281-3912

ຫຼືຂຽນຫາຂ້າພະເຈົ້າຕາມບ່ອນຢູ່ໃນລ່າວສານນີ້ເອງ .

## FREE ENGLISH-LAO-ENGLISH DICTIONARY AVAILABLE

If you wish to request an English-Lao-English Dictionary book, please fill out the form below the dotted line. Give the " A " number and mail it to the address below.

If further information is desired, call toll free : 1-800-424-0212 .

ຖ້າທ່ານຕ້ອງການປື້ມ ວັຈນານຸກົມ ອັງກິດ-ລາວ-ອັງກິດ , ກະລຸນາ ໃຫ້ຂຽນຕອບແບບຟອມ ຂ້າງລຸ່ມນີ້ ໂດຍຂຽນຕື່ມໃສ່ແຖວທີ່ປະໄວ້ນັ້ນ . ຂໍໃຫ້ບອກນ້ຳເບີ "A" ພ້ອມ ແລ້ວສົ່ງທາງເມລໄປຍັງຕາມທີ່ຢູ່ຂ້າງລຸ່ມນີ້ .

ຖ້າທ່ານຕ້ອງການຮູ້ລາຍລະອຽດເພີ້ມເຕີມ ຂໍໃຫ້ຕິດຕໍ່ໂດຍບໍ່ໄດ້ເສັຽຄ່າໄປຍັງນ້ຳເບີ 1-800-424-0212 ໄດ້ .

---

Mr. Hal Bailin
Director of Publications,
Donohoe Building , Room 1179,
330 Independence Avenue , S.W.
Washington , D.C. 20201

Name: ______________________ " A " Number ______________
ຊື່ແລະນາມສະກຸນ: ນ້ຳເບີ "A"

Family size: __________ person (s) , Telephone Number: ______________
ຂນາດຄອບຄົວ ຄົນ ເບີໂທຣະສັບ

Address: ______________________ Apartment Number: ______________
ທີ່ຢູ່ ເບີຫ້ອງທີ່ພັກຢູ່

City: ______________ State: ______________ Zip Code: ______________
ເມືອງ ຣັດ ເບີ້ຊິບໂຄດ

GOVERNOR'S TASK FORCE
FOR INDOCHINESE RESETTLEMENT
1000 EAST GRAND
DES MOINES, IOWA 50319

Bulk Rate
U.S. Postage Paid
Des Moines, Ia.
Permit No. 1195

State Library
Historical Bldg.
Des Moines, Iowa 50319